ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
======00000======

ສະຫະພັນກໍາມະບານ ທະນາຄານແຫ່ງ ສປປ ລາວ
ກໍາມະບານຮາກຖານ ທະນາຄານແຫ່ງ ສປປ ລາວ

ເລກທີ: 386/ກບຮຖ.ທຫລ
ນະຄອນຫຼວງວຽງຈັນ, ວັນທີ: 18 NOV 2014

# ແຈ້ງການ

**ເຖິງ:** - ບັນດາໜ່ວຍກໍາມະບານຮາກຖານ ທຫລ
- ບັນດາໜ່ວຍຊາວໜຸ່ມຮາກຖານ ທຫລ
- ບັນດາໜ່ວຍສະຫະພັນແມ່ຍິງຮາກຖານ ທຫລ

**ເລື່ອງ:** ລະດົມສະມາຊິກສາມອົງການຈັດຕັ້ງ ເພື່ອເຂົ້າຮ່ວມຂະບວນການບໍລິຈາກເລືອດ.

- ອີງຕາມ ແຈ້ງການເຊີນຊວນບໍລິຈາກເລືອດຂອງອົງການກາແດງລາວ ສູນບໍລິຈາກເລືອດ ສະບັບເລກທີ 838/ສລຊ.ກດລ, ລົງວັນທີ 11/11/2014.

ກໍາມະບານຮາກຖານ ທະນາຄານແຫ່ງ ສປປ ລາວ ຕາງໜ້າໃຫ້ສາມອົງການຈັດຕັ້ງ ຂໍແຈ້ງມາຍັງບັນດາໜ່ວຍຮາກຖານທີ່ຂຶ້ນກັບສາມອົງການຈັດຕັ້ງມະຫາຊົນ ທຫລ ໃຫ້ລະດົມສະມາຊິກຂອງຕົນ ເຂົ້າຮ່ວມຂະບວນການບໍລິຈາກເລືອດ **ບໍ່ໃຫ້ຫຼຸດ 2 ສະຫາຍຕໍ່ໜ່ວຍ**. ການບໍລິຈາກເລືອດຈະໄດ້ຈັດຂຶ້ນໃນວັນທີ **27 ພະຈິກ 2014** ຢູ່ທີ່ **ສະໂມສອນ ໂຮງຮຽນມັດທະຍົມ ມິດຕະພາບວຽງຈັນ-ໂຮ່ຈິມິນ** (ໂຮງຮຽນມັດທະຍົມຕອນປາຍ ສີໂຄດຕະບອງເກົ່າ) ເລີ່ມແຕ່ເວລາ **8:30 ຈົນເຖິງ 15:00** ໂມງ.

**ໝາຍເຫດ**: ໃຫ້ມາເຕົ້າໂຮມຢູ່ໜ່ວຍລົດກ່ອນ **8:30** ໂມງ ໃນວັນທີ **27 ພະຈິກ 2014**, ສ່ວນຜູ້ທີ່ມີເງື່ອນໄຂສະດວກກໍ່ສາມາດໄປເອງໄດ້; ພ້ອມນີ້ໃຫ້ສົ່ງລາຍຊື່ພ້ອມເບີໂທຜູ້ທີ່ຈະເຂົ້າຮ່ວມມາຍັງ **ສະຫາຍ ຈັນສຸກ ຈັນທະວົງ** (ກົມກວດກາ ໂທ 261976) ຊ້າສຸດບໍ່ໃຫ້ກາຍວັນທີ **25/11/2014.**

ດັ່ງນັ້ນ, ຈິ່ງແຈ້ງມາຍັງ ບັນດາໜ່ວຍຮາກຖານທີ່ຂຶ້ນກັບສາມອົງການຈັດຕັ້ງມະຫາຊົນ ທຫລ ເພື່ອໃຫ້ສະມາຊິກຂອງຕົນເຂົ້າຮ່ວມຂະບວນການດັ່ງກ່າວດ້ວຍ.

**ປະທານກໍາມະບານຮາກຖານ ທຫລ**

ແສງເພັດ ດວງພິລາ

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ອົງການກາແດງລາວ
ສູນບໍລິຈາກເລືອດ
ໂທ: 021.218922-21.4763

838

ເລກທີ :........................ /ສລຊ.ກດລ

ນະຄອນຫລວງວຽງຈັນ, ວັນທີ 11 ພະຈິກ 2014

ທະນາຄານແຫ່ງສ.ປ.ປ.ລາວ
ຂາເຂົ້າ ເລກທີ: 6664
ວັນທີ: 14.11.14
ໂທລະສັບ: 243710

## ແຈ້ງການເຊີນຊວນບໍລິຈາກເລືອດ

ຮຽນ : ທ່ານ : ຜູ້ອຳນວຍການ ທະນາຄານ ແຫ່ງ ສປປ ລາວ

ເລື່ອງ : ເຊີນເຂົ້າຮ່ວມບໍລິຈາກເລືອດ ເພື່ອຕ້ອນຮັບວັນຊາດທີ 2 ທັນວາ ຄົບຮອບ 39ປີ ( 27 ພະຈິກ 2014 )

ສູນເລືອດແຫ່ງຊາດ ອົງການກາແດງລາວ ໃນນາມກອງເລຂາຄະນະກຳມະການ ສົ່ງເສີມການບໍລິຈາກເລືອດ-ສົ່ງເລືອດແຫ່ງຊາດ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ໃນວັນທີ 27 ພະຈິກ 2014, ສູນເລືອດແຫ່ງຊາດ ອົງການກາແດງລາວ ຈະໄດ້ຈັດຂະບວນຮັບບໍລິຈາກເລືອດແບບເປີດກວ້າງຂຶ້ນ ຢູ່ທີ່ສະໂມສອນ ໂຮງຮຽນ ມັດທະຍົມ ມິດຕະພາບວຽງຈັນ-ໂຮ່ຈີມິນ ( ໂຮງຮຽນ ມ/ປ ສີໂຄດຕະບອງເກົ່າ ) ຊຶ່ງຈະເລີ່ມແຕ່ເວລາ 08:30 ຈົນເຖິງ 15:00 ມ.

ຈຸດປະສົງແມ່ນແນໃສ່ໃຫ້ຊັ້ນຄົນຕ່າງໆ ທີ່ມີເງື່ອນໄຂ ໄດ້ປະກອບສ່ວນໃນວຽກງານມະນຸດສະທຳ ເວົ້າລວມ, ເວົ້າສະເພາະກໍແມ່ນ ການບໍລິຈາກເລືອດເພື່ອຊ່ວຍເຫລືອຄົນເຈັບ ທີ່ກຳລັງນອນຮັກສາ ພະຍາບານຕົວຢູ່ຕາມໂຮງໝໍແຫ່ງຕ່າງໆໃນປັດຈຸບັນ.

ສຳລັບພາກສ່ວນຂອງທ່ານ ພວກເຮົາມີແຜນການເຊີນ ຜູ້ເຂົ້າຮ່ວມບໍລິຈາກຈຳນວນ :......20....... ທ່ານ ຫລື ຫລາຍກວ່ານັ້ນກໍຍິ່ງເປັນການດີ .

ຫວັງຢ່າງຍິ່ງວ່າ ຄົງຈະໄດ້ຮັບການພິຈາລະນາຈາກທ່ານ ຕາມເຫັນສົມຄວນ .

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ໝາຍເຫດ : ກະລຸນາແຈ້ງຈຳນວນຜູ້ເຂົ້າຮ່ວມ
ແລະ ເງື່ອນໄຂການໄປ-ມາໃຫ້ສູນເລືອດ
ບໍ່ກາຍວັນທີ 21 ພະຈິກ 2014

17/11/2014

ພາສີ ພົມມະວອນ

ຫົວໜ້າສູນເລືອດແຫ່ງຊາດ
ກອງເລຂາ ( ຄສລ )

ດຣ.ຈັນທະລາ ສຸກສາຄອນ

ສູນເລືອດແຫ່ງຊາດ, ອົງການກາແດງລາວ National Blood Transfusion Centre, Lao Red Cross , ຖະໜົນ: ໄຜ່ໜາມ, ບ. ສີສະຫາດ, ມ. ຈັນທະບູລີ ນະຄອນຫຼວງວຽງຈັນ, ສປປລາວ. PO BOX: 650, Tel: 856 (21) 218922; Fax: 856 (21) 218923Email: chanthala2010@gmail.com; pbanchanthavong@gmail.com

18/11

ນ. ຂັນແກ້ວ ຫຼ້າມະນີເງິາ